ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສຶກສາທິການ ແລະ ກິລາ
ກົມແຜນການ
ໂຄງການກອງທຶນຮ່ວມມືສາກົນເພື່ອການສຶກສາໄລຍະສາມ

ເລກທີ 0784 /ຜກ
ນະຄອນຫລວງວຽງຈັນ, ວັນທີ 10 ມີນາ 2025

## ໜັງສືເຊີນເຂົ້າຮ່ວມການສົມທຽບລາຄາ

ເຖິງ: ________________________________________

1. ກະຊວງສຶກສາທິການ ແລະ ກິລາ, ກົມແຜນການ ໄດ້ຮັບທຶນຊ່ວຍເຫຼືອລ້າ ຈາກໂຄງການກອງທຶນຮ່ວມມືສາກົນເພື່ອການສຶກສາໄລຍະສອງ (GPE III) ພາຍໃຕ້ການຄຸ້ມຄອງຂອງທະນາຄານໂລກ ເພື່ອດຳເນີນການສົມທຽບລາຄາການຈັດພິມປຶ້ມນິທານ ຈຳນວນ 16 ເລື່ອງ ລວມທັງໝົດ 25,792 ຫົວ ສະໜອງໃຫ້ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ ພາຍໃຕ້ໂຄງການ GPE III-LEAP.
2. ກະຊວງສຶກສາທິການ ແລະ ກິລາ, ກົມແຜນການ ໂຄງການກອງທຶນຮ່ວມມືສາກົນເພື່ອການສຶກສາໄລຍະສາມ GPE III ຂໍເຊີນບໍລິສັດຂອງທ່ານເຂົ້າຍື່ນຊອງສົມທຽບລາຄາການຈັດພິມປຶ້ມນິທານ ຈຳນວນ 16 ເລື່ອງ ລວມທັງໝົດ 25,792 ຫົວ ໄລຍະເວລາໃນການສົ່ງມອບແມ່ນ 30 ວັນ (ພາຍຫຼັງເຊັນສັນຍາ).
3. ການສົມທຽບລາຄານີ້ຈະດຳເນີນຕາມຂັ້ນຕອນການປະມູນສົມທຽບລາຄາທີ່ໄດ້ກຳນົດໄວ້ຢູ່ ກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017, ຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019 ແລະ ຄຳແນະນຳເພີ່ມເຕີມສຳລັບມາດຕາ 23 ແລະ ມາດຕາ 31 ຂອງຄຳແນະນຳການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 1995/ກງ, ລົງວັນທີ 24 ມິຖຸນາ 2019. ບໍລິສັດ ຫຼື ຫ້າງຮ້ານສົນໃຈເຊີນຕິດຕໍ່ເອົາຊອງສົມທຽບລາຄາ ນັບແຕ່ວັນທີ 10 – 24 ມີນາ 2025 ຕາມເວລາໂມງລັດຖະການ.
4. ຊອງສະເໜີລາຄາຈະຕ້ອງສົ່ງກ່ອນ ເວລາ 14:00 ໂມງ ຂອງວັນທີ 24 ມີນາ 2025 ແລະ ຊອງສະເໜີລາຄາທຸກໆຊອງຈະໄດ້ເປີດໃນເວລາ 14:05 ໂມງ ຂອງມື້ດຽວກັນ ໂດຍຊ່ອງໜ້າຄະນະກຳມະການ ແລະ ຜູ້ທີ່ຍື່ນຊອງຕາງໜ້າບໍລິສັດທີ່ສົນໃຈຢາກເຂົ້າຮ່ວມ ທີ່ຫ້ອງປະຊຸມຫ້ອງການປະສານງານສາກົນເພື່ອການສຶກສາ (ECU), ຊັ້ນ 3 ຕຶກ ICT, ກົມແຜນການ, ກະຊວງສຶກສາທິການ ແລະ ກິລາ. ສະຖານ ທີ່ ຖະໜົນລ້ານຊ້າງ, ຕຶກ ICT ຊັ້ນ 3, ຕູ້ ປນ. 067 ໂທ/ແຟັກ: (+865 21) 243672; ອີເມວ: ecudp.laopdr@moes.edu.la

**ຮອງຫົວໜ້າກົມ**
**ຫົວໜ້າຄະນະຮັບຜິດຊອບໂຄງການ**

ອະນຸແພງ ແກ້ວວົງສາ